**ສານອວຍພອນບຸນປີໃໝ່ປະເພນີຂອງຊາວຫວຽດນາມ**

**ສະແດງຄວາມນັບຖືມາຍັງສະຫາຍຫົວໜ້າ ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງຮ່າຕິ້ງ ສສ ຫວຽດນາມ ພ້ອມດ້ວຍຄະນະນຳພະແນກ ແລະ ພະນັກງານ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງຮ່າຕິ້ງ ສສ ຫວຽດນາມ.**

ເນື່ອງໃນໂອກາດອັນສະຫງ່າລາສີ ບຸນປີໃໝ່ປະເພນີຂອງຊາວຫວຽດນາມ ທີ່ຈະໝູນວຽນມາເຖິງນີ້, ຂ້າພະເຈົ້າໃນນາມຕາງໜ້າໃຫ້ຄະນະພັກ, ຄະນະນຳພະແນກ ພ້ອມດ້ວຍພະນັກງານພະແນກເຕັກໂນໂລຊີ ແລະ ການສື່ສານແຂວງບໍລິຄຳໄຊ ສປປ ລາວ ໃນນາມສ່ວນຕົວ ແລະ ຄອບຄົວ, ຂໍສົ່ງຄຳຢື້ຢາມຖາມຂ່າວ ອັນອົບອຸ່ນ ແລະ ພອນໄຊອັນປະເສີດມາຍັງບັນດາສະຫາຍຄະນະພັກ, ຄະນະນຳພະແນກ ແລະ ພະນັກງານພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງຮ່າຕິ້ງ ສສ ຫວຽດນາມ ພ້ອມດ້ວຍຄອບຄົວຂອງພວກທ່ານ.

ການເຄື່ອນໄຫວວຽກງານການຮ່ວມມືລະຫວ່າງສອງພະແນກຂອງພວກເຮົາ ຕະຫຼອດໄລຍະປີ 2022 ຜ່ານມາ ເຖິງຈະຢູ່ໃນບັນຍາກາດການຜ່ອນຄາຍມາດຕະການໂຄວິດ-19 ແລະ ການເປີດປະເທດຄືນໃໝ່ ແຕ່ພວກເຮົາກໍຍັງປະເຊີນໜ້າກັບສະພາບການຂອງໂລກທີ່ເພີ່ມທະວີການຜັນແປໄປຢ່າງໄວວາສັບສົນ, ສັງຄົມມະນຸດໄດ້ຢືນຢູ່ບາດລ້ຽວທາງປະຫວັດສາດທີ່ສຳຄັນຄັ້ງໃໝ່. ເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍຕ່າງໆ ສິ່ງດັ່ງກ່າວໄດ້ກະທົບທາງອ້ອມ ແລະ ທາງກົງຕໍ່ຊີວິດການເປັນຢູ່ ແລະ ການປະຕິບັດໜ້າທີ່ຂອງພວກເຮົາ.

ເຖິງແນວໃດກໍຕາມ, ບັນດາສະຫາຍກໍຍັງສືບຕໍ່ປະກອບສ່ວນເຫື່ອແຮງ ແລະ ສະຕິປັນຍາຂອງຕົນດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ຂັ້ນເທິງມອບໝາຍໃຫ້ໃນການເຄື່ອນໄຫວວຽກງານຮ່ວມມືລະຫວ່າງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງຮ່າຕິ້ງ ສສ ຫວຽດນາມ ກັບ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງບໍລິຄຳໄຊ ສປປ ລາວ ຢ່າງຕັ້ງໜ້າ. ຂ້າພະເຈົ້າຕີລາຄາສູງ ແລະ ຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງຈິງໃຈ ແລະ ເຊື່ອໝັ້ນຢ່າງໜັກແໜ້ນວ່າພວກເຮົາຈະສາມາດຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກນາໆປະການ.

ຂ້າພະເຈົ້າຂໍຮຽກຮ້ອງມາຍັງບັນດາສະຫາຍຄະນະພັກ, ຄະນະນຳພະແນກ ພ້ອມດ້ວຍພະນັກງານຂອງພວກທ່ານຈົ່ງສືບຕໍ່ໃຫ້ການຮ່ວມມືຊ່ວຍເຫຼືອພະແນກຂອງພວກເຮົາ ແລະ ຮັກສາມູນເຊື້ອຄວາມສາມັກຄີຊ່ວຍເຫຼືອເອື້ອເຟື້ອເຊິ່ງກັນ ແລະ ກັນ.

ອີກເທື່ອໜຶ່ງ, ໃນໂອກາດບຸນປີໃໝ່ປະເພນີຂອງຊາວຫວຽດນາມ, ຂ້າພະເຈົ້າຕາງໜ້າໃຫ້ຄະນະພັກ, ຄະນະນຳພະແນກ ແລະ ພະນັກງານພະແນກເຕັກໂນໂລຊີ ແລະ ການສື່ສານແຂວງບໍລິຄຳໄຊ ສປປ ລາວ ຂໍອວຍພອນໄຊມາຍັງບັນດາສະຫາຍຄະນະພັກ, ຄະນະນຳພະແນກ ແລະ ພະນັກງານ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງຮ່າຕິ້ງ ສສ ຫວຽດນາມ ພ້ອມດ້ວຍຄອບຄົວຂອງພວກທ່ານ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ.

ດ້ວຍຄວາມນັບຖື ແລະ ຮັກແພງ.

ບໍລິຄຳໄຊ, ວັນທີ 20 ມັງກອນ 2023

**ຕາງໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງບໍລິຄຳໄຊ**

**ລັງສີ ແກ້ວວິເສດ**